## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 9 ກໍຣະກົດ 2006 ( 7-9-2006 )

## ຂ້າພະເຈົ້າຈະວາງໃຈໃນພຣະປະສົງແລະ ພຣະອຳນາດຂອງພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ອພຍ 3:4-8ກ, 19-21; 4:10-12, 27-31

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າຊົງສັກສິດ; ດັ່ງນັ້ນພຣະອົງຈຶ່ງສ້າງໄພ່ພົນທີ່ພຣະອົງສາມາດ ແລະຈະຊ່ອຍເຫລືອເຂົາໃນການເຮັດໃຫ້ມີຊັຍຕໍ່ສະພາບການທັງຫລາຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ສະແດງອອກໃຫ້ເຫັນເຖິງການເພິ່ງພຣະເຈົ້າດ້ວຍ:

- ການໃຫ້ເຫັນຄວາມຢ້ານກົວທີ່ຈະຂັດຂວາງທ່ານຈາກການວາງໃຈໃນພຣະປະສົງແລະພຣະອຳນາດຂອງພຣະເຈົ້າ, ແລະ
- ການວາງໃຈໃນພຣະເຈົ້າເຖິງຈະມີຄວາມຢ້ານກໍຕາມ.

## ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າຕ້ອງການແລະສາມາດຊ່ອຍຂ້າພຣະເຈົ້າ ໃນສະພາບການທີ່ມີຊັຍຊະນະ?

ໂຈເອ, ເດັກນ້ອຍອາຍຸແປດປີໄດ້ໄປຢາມແລະຢູ່ນຳພໍ່ເຖົ້າແມ່ເຖົ້າໃນຟາມປະມານນຶ່ງເດືອນໃນເວລາພັກຮ້ອນ. ໃນລະຍະການຢ້ຽມຢາມແຕ່ລະເທື່ອ, ແມ່ເຖົ້າຂອງລາວຮູ້ສຶກວ່າໂຈເອຍັງມີຂໍ້ຂ້ອງໃຈໃນເຣື່ອງໃດເຣື່ອງນຶ່ງ. ໃນເມື່ອເຂົາເຈົ້າທັງສອງໄດ້ຢ້ຽມກັນນັ້ນ, ຄວາມຈິງກໍໄດ້ເຜີຍອອກມາດັ່ງນີ້. ໂຈເອໄດ້ຄິດກ່ຽວກັບການເປັນຄຣິສຕຽນ. ລາວມີຄຳຖາມຫລາຍຂໍ້ພ້ອມທັງກັບມີຄວາມຢ້ານກົວບາງອັນ. ລາວເຂົ້າໃຈຍາກໃນຄວາມໝາຍທີ່ວ່າ " ວາງໃຈໃນພຣະເຢຊູຢ່າງໃດ? "

ແມ່ເຖົ້າໄດ້ເຣີ່ມຕົ້ນເວົ້າວ່າ, " ໂຈເອ ວ າດພາບເຫັນວ່າມີເຫວເລິກຕໍ່ໜ້າເຮືອນຂອງລາວ". " ວາດພາບເໝືອນວ່າມີຂົວທີ່ເຮັດດ້ວຍໄມ້ເກົ່າໆທີ່ຫ້ອຍຢູ່ໃຕ້ເຊືອກທີ່ຜູກຕໍ່ຣະຫວ່າງຟາກນັ້ນແລະຟາກນີ້. ໄມ້ທີ່ເປັນຂົວສຳລັບຍ່າງຂ້າມໄປກໍຜຸພັງແລ້ວ ແລະເຊືອກທີ່ໄມ້ຫ້ອຍຢູ່ນັ້ນກໍສາມາດຂາດໄດ້ທຸກເວລາ." ໂຈເອໄດ້ພິຈາຣະນາເບິ່ງສິ່ງນີ້ຢູ່. ແມ່ເຖົ້າໄດ້ຖາມວ່າ, " ເຈົ້າຢາກຈະໃຊ້ຂົວນີ້ຂ້າມໄປບໍ່? " ໂຈເອຕອບວ່າ, " ບໍ່ ". " ບາດນີ້ໂຈເອເອີຍ, ຖ້າຫາກແມ່ນພຣະເຢຊູຢືນຢູ່ຟາກຂົວເບື້ອງນັ້ນ. ເພິ່ນໄດ້ບອກໃຫ້ເຈົ້າວ່າ, " ຈົ່ງຂ້າມມາແມ, ເຮົາຈະບໍ່ປ່ອຍໃຫ້ເຈົ້າຕົກລົງໄປດອກ. ແລ້ວເຈົ້າຈະຂ້າມໄປບໍ່? " ໂຈເອຕອບວ່າ, " ຂ້ອຍຈະຂ້າມໄປແທ້. " ຫລາຍປີຕໍ່ມາ, ໂຈເອໄດ້ກາຍເປັນສິດຍາພິບານກໍໄດ້ເວົ້າເຣື່ອງນີ້ໃຫ້ແກ່ຄຣິສຕະຈັກຟັງໃນເມື່ອລາວໄດ້ໃຫ້ຄຳພະຍານ. ສິດຍາພິບານໄດ້ເວົ້າວ່າ, " ເມື່ອຂ້າພະເຈົ້າເວົ້າວ່າ, " ຂ້ອຍຈະຂ້າມໄປ " ມັນເປັນຄຳຕອບທີ່ຕລອດໄປ.

ຄວາມຢ້ານໄດ້ຮັກສາພວກທ່ານບໍ່ໃຫ້ວາງໃຈຕໍ່ພຣະເຈົ້າບໍ່? ຖ້າຫາກເປັນເຊັ່ນນັ້ນ, ທ່ານກໍບໍ່ໄດ້ເປັນຄົນທຳອິດດອກ. ໃນບົດຮຽນວັນນີ້ຈະໄດ້ສອນເຣື່ອງ ໂມເຊທີ່ໄດ້ສະແດງໃຫ້ເຫັນຄວາມຢ້ານທີ່ເຮັດໃຫ້ເພິ່ນລັງເລໃຈບໍ່ໃຫ້ຕາມພຣະເຈົ້າໄປ.

## ສຶກສາພຣະຄັມພີ

1. <u>ພຣະເຈົ້າຊົງເລີ່ມຈະຊ່ອຍເຫລືອ</u> ( ອພຍ 3:4-8ກ )

ໂມເຊໄດ້ເກີດໃນບ່ອນທີ່ໂຫດຮ້າຍ, ແລະອັນຕລາຍປະມານແປດສິບປີກ່ອນທີ່ຈະປະສົບກັບພຸ່ມໄມ້ທີ່ເກີດເປັນໄຟ. ເຖິງແມ່ນວ່າພຣະເຈົ້າໄດ້ລົງມືທີ່ຈະປ້ອງກັນຮັກສາ ແລະໄດ້ກະຕຽມໃຫ້ໂມເຊໄດ້ນຳເອົາພຣະປະສົງຂອງພຣະເຈົ້ານຳໄປປະຕິບັດ. ໃນ ອພຍ 1:15-21, ໄດ້ບອກໃຫ້ພວກຫມໍຜະດຸງຄັນໃຫ້ລະເມີດຄຳສັ່ງຂອງຟາໂຣ ແລະອະນຸຍາດໃຫ້ທາຣົກຊາຍຂອງຊາວເຮບເລີໃຫ້ເກີດມາມີຊີວິດຢູ່. ເມື່ອຟາໂຣໃຊ້ວິທີໃຫມ່ໃຫ້ຂ້າເດັກນ້ອຍເພື່ອຈຳກັດຈຳນວນພົລເມືອງຜູ້ຊາຍ, ພຣະເຈົ້າກໍໄດ້ຕຽມໃຫ້ມີເຈົ້າຍິງທີ່ມີໃຈສົງສານຈາກຄອບຄົວຂອງເຈົ້າຊີວິດອີຢິບໃຫ້ຮັບເອົາໂມເຊໄປລ້ຽງໄວ້ເຫມືອນກັບເປັນລູກຊາຍຂອງຕົນ. ຊ້ຳບໍ່ພໍພຣະເຈົ້າຍັງໃຫ້ເອື້ອຍໄດ້ມີຫົນທາງເພື່ອຈະເບິ່ງວ່າໂມເຊໄດ້ຖືກລ້ຽງດູສ່ວນນຶ່ງຈາກຄອບຄົວເຮັບເຣີຂອງລາວເອງ. ຕໍ່ມາ, ໂມເຊກໍໄດ້ກາຍເປັນຜູ້ໃຫຍ່ແລ້ວ, ພຣະເຈົ້າກໍໄດ້ປ້ອງກັນລາວເມື່ອຟາໂຣມີຈຸດປະສົງຈະຂ້າລາວ.

ຈົນກວ່າວ່າພຣະເຈົ້າໄດ້ເວົ້າຕໍ່ໂມເຊຈາກໄຟທີ່ໃຫມ້ພຸ່ມໄມ້ແລະໄດ້ບອກວ່າພຣະອົງເປັນພຣະເຈົ້າ ໂມເຊຈຶ່ງໄດ້ຮູ້ວ່າຕົນເອງໄດ້ຢືນຢູ່ທີ່ພຣະເຈົ້າສະຖິດຢູ່ນຳ. ໂມເຊໄດ້ລີ້ຫນ້າເພິ່ນເອງໄວ້ຊຶ່ງເປັນການກະທຳທີ່ສະແດງໃຫ້ເຫັນຄວາມຢ້ານແບບນັບຖື. ການຢ້ານແບບນີ້ມັນແຕກຕ່າງຢ່າງຫລວງຫລາຍຈາກຄວາມຢ້ານທີ່ປາສຈາກການໄວ້ວາງໃຈໃນພຣະເຈົ້າ.

ດັ່ງທີ່ພຣະເຈົ້າໄດ້ທຳຜ່ານໂມເຊ, ພຣະອົງກໍຍັງໄດ້ທຳຜ່ານຄົນອື່ນໆເພື່ອຈະຊ່ອຍໄພ່ພົນຂອງພຣະອົງ. ໄພ່ພົນຂອງພຣະອົງຈະສາມາດຮູ້ໄດ້ວ່າ ພຣະເຈົ້າໄດ້ກະທຳເພື່ອຊ່ອຍເຫລືອເຂົາໃຫ້ເອົາຊະນະສະພາບການຕ່າງໆຊຶ່ງບາງເທື່ອພວກເຂົາເອງກໍບໍ່ໄດ້ຮູ້ຊ້ຳ.

2. <u>ພຣະອຳນາດຂອງພຣະເຈົ້ານັ້ນເຫນືອກວ່າສິ່ງໃດໆທັງຫມົດ</u> ( ອພຍ 3:19-21 )

ໂມເຊໄດ້ຖືກເຮັດໃຫ້ງົງຈາກການສອນຂອງພຣະເຈົ້າວ່າ ໃຫ້ເພິ່ນເປັນຄົນນຶ່ງທີ່ນຳພວກອິສຣາເອັນໃຫ້ອອກຈາກການເປັນທາດ. ເພິ່ນເຖົ້າມີອາຍຸຕັ້ງ 80 ປີແລ້ວໄດ້ຫລົບຫນີຈາກຟາໂຣ, ເພິ່ນອາດຈະບໍ່ຄິດກັບມາຍັງດິນແດນທີ່ຄົນທັງຫລາຍຕ້ອງການເອົາຊີວິດຂອງເພິ່ນ. ນອກຈາກຈະເປັນຄົນລ້ຽງແກະ, ບໍ່ແມ່ນເປັນຄົນນຳຝູງຄົນ. ເພິ່ນເລີ່ມຕົ້ນຈະແກ້ຕົວ. ຂໍ້ແກ້ຕົວທຳອິດແມ່ນເພິ່ນບໍ່ຮູ້ຈັກຮອດຊື່ຂອງພຣະເຈົ້າຊ້ຳ. ພຣະເຈົ້າໄດ້ບອກເພິ່ນວ່າ, " ເຮົາເປັນຜູ້ທີ່ເຮົາເປັນ " ( ຂໍ້ 14 ). ຢາເວ, ຊື່ສະເພາະຕົວຂອງພຣະເຈົ້າ, ທີ່ປາກົດໃນຂໍ້ທີ 15, ຊຶ່ງແປມາຈາກອັກສອນເຮັບເຣີຂອງຊື່ນີ້, ຢາເວ. ຊື່ນີ້ມີຄວາມຫມາຍສອງຢ່າງວ່າການສະຖິດຢູ່ນຳຂອງພຣະເຈົ້າ, ແລະຄວາມເລິກລັບຂອງພຣະເຈົ້າອ້ອມຮອບພຣະກາຍຂອງພຣະອົງ. ພຣະເຈົ້າຍັງໄດ້ບອກໂມເຊວ່າໃຫ້ເວົ້າຫຼັງກັບພວກອາວຸໂສຂອງອິສຣາເອັນ ແລະຟາໂຣດ້ວຍ. ພຣະເຈົ້າໄດ້ບອກລ່ວງຫນ້າເຖິງປະຕິກິຣິຍາຂອງທັງສອງຝ່າຍ: ພວກອິສຣາເອັນຈະຟັງ; ຟາໂຣຈະບໍ່ຟັງ.

ງານທີ່ຈະທຳໃນພາກຫນ້ານັ້ນເປັນງານທີ່ຍາກ ຈົນບໍ່ຫນ້າຢາກເຊື່ອສຳລັບຄົນລ້ຽງແກະຜູ້ລັງເລໃຈ. ພຣະເຈົ້າເອງກໍຈະມີພາຣະບໍ່ເບົາເຊັ່ນດຽວກັນ. ພຣະເຈົ້າໄດ້ສລູບບາງຢ່າງໃຫ້ໂມເຊຮູ້ໃນງານທີ່ຈະທຳໃນອະນາຄົດ. ຟາໂຣຈະປະຕິເສດບໍ່ຍອມໃຫ້ພວກອິສຣາເອັນໄປຈົນກວ່າວ່າຈະໄດ້ຖືກຂ້ຽນຈາກພຣະຫັດອັນແຂງແຮງ. ພຣະເຈົ້າຈະໄດ້ກະຕຽມມືອັນເຂັ້ມແຂງນີ້ດ້ວຍພຣະອົງເອງ ມັນເປັນອາວຸດທີ່ອັສຈັນທີ່ຈະສາມາດກົດພຣະອົງເພື່ອໃຫ້ຍອມປ່ອຍພວກອິສຣາເອັນໃຫ້ຫນີໄປ. ເຫນືອກວ່ານັ້ນອີກ, ພຣະເຈົ້າຈະເຮັດໃຫ້ພວກອິສຣາເອັນມີຄວາມຖືກອົກຖືກໃຈໃນທາງນີ້ກັບພວດອີຢິບ ເພາະວ່າການສຳພັນຂອງພວກເຂົາກັບພຣະເຈົ້າຜູ້ມີອຳນາດອັນຫາທີ່ປຽບບໍ່ໄດ້.

ໃນບົດທີ 5 ຈົນເຖິງບົດທີ 12 ຂອງພຣະທັມອົພະຍົບໄດ້ບັນທຶກຄຳຫມັ້ນສັນຍາຂອງພຣະເຈົ້າທຸກຂໍ້. ພຣະເຈົ້າມີຄວາມສາມາດສເມີທີ່ຈະໃຫ້ໄພ່ພົນຂອງພຣະອົງພົ້ນອອກໄປ, ເຖິງແມ່ນວ່າເພິ່ນຈະເລືອກຫລືບໍ່ເລືອກທຳກໍຕາມ.

ຫລາຍປີຜ່ານມານີ້, ຂ້າພະເຈົ້າຮູ້ສຶກວ່າພຣະເຈົ້າໃຫ້ເຮັດວຽກຫນັກ. ຂ້າພະເຈົ້າໄດ້ນຳພາຄົນໂອກລາໂຮມາກຸ່ມນຶ່ງ ໃນການເປັນຜູ້ຮ່ວມສ່ວນໃນການຮັບໃຊ້ຮ່ວມກັນກັບຄົນອີກກຸ່ມນຶ່ງຂອງຄຣິສຕະຈັກບັບຕິສໃນອາເຢັນຕິນາ. ງານຂອງຂ້າພະເຈົ້າແມ່ນກ່ຽວກັບໃຫ້ຮອບຮອມແລະໃຫ້ຝຶກອົບຮົມຄົນ 7 ທີມໆລະຈຳນວນຜູ້ຮັບສມັກ 20-30 ຄົນທີ່ຈະໄປອາເຢັນຕິນາໃນທຸກໆ 6 ເດືອນໃຫ້ໄປທຳງານກັບພວກຜູ້ຮັບໃຊ້ ແລະພວກສິດຍາພິບານເພື່ອຊ່ອຍຕັ້ງໂບດໃຫມ່.

ຂ້າພະເຈົ້າບໍ່ເຄີຍໄປອາເຢັນຕີນາຈັກເທື່ອ. ເປັນເວລາຫລາຍປີແລ້ວເມື່ອຂ້າພະເຈົ້າໄດ້ນຳພາທີມງານການຮັບໃຊ້ຣະຫວ່າງຊາດສ່ວນຕົວ. ຂ້າພະເຈົ້າເວົ້າພາສາສະແປນກໍບໍ່ໄດ້! ຫລາຍເທື່ອ, ຂ້າພະເຈົ້າຄິດວ່າ: ອັນນີ້ມັນເກີນຄວາມສາມາດສ່ວນຕົວຂອງຂ້າພະເຈົ້າແລ້ວ. ແມ່ນຫຽັງນໍໄດ້ນຳຂ້າພະເຈົ້າມານະທີ່ນີ້? ຄຳສັ່ງຂອງພຣະເຈົ້າໄດ້ມາເຖິງຂ້າພະເຈົ້າວ່າໃຫ້ຂ້າພະເຈົ້າເພິ່ງພາອາສັຍພຣະອົງ: ພຣະອົງຈະຕຽມຄວາມສາມາດແລະອຳນາດໃຫ້ເພື່ອຈະເຮັດໃຫ້ງານນັ້ນສຳເຣັດຜົນ. ດຽວນີ້ ຂ້າພະເຈົ້າແນມຄືນຫລັງເພື່ອເບິ່ງປະສົບການອັນນັ້ນ. ໄດ້ມີຄຣິສຕະຈັກໃຫມ່ຊາວສີ່ຄຣິສຈັກໄດ້ເກີດມີຂຶ້ນ, ຫລາຍຮ້ອຍຄົນໄດ້ໄດ້ຮັບເຊື່ອໃນພຣະຄຣິດ, ແລະມີຫລາຍກວ່າຊາວທີມທີ່ເປັນສະມາຊິກໄດ້ຖວາຍຊີວິດຂອງຕົນເພື່ອການຮັບໃຊ້ອັນນີ້.

ພຣະເຈົ້າຍັງໄດ້ໃຫ້ຄົນທັງຫລາຍ ທີ່ວາງໃຈໃນພຣະອົງ ໄດ້ຮັບຊັຍຊະນະ. ພຣະອົງສາມາດໃຫ້ໄພ່ພົນຂອງພຣະອົງໄດ້ພົ້ນການເປັນທາດທັງທີ່ເຂົາຈະເລືອກເອົາກໍຕາມ. ພວກເຮົາສາມາດຫມັ້ນໃຈໄດ້ ວ່າບໍ່ມີສະພາບການກົດຂີ່ອັນໃດທີ່ເຫນືອອຳນາດຂອງພຣະເຈົ້າເພື່ອຈະທຳທຸກວິທີເພື່ອໃຫ້ພວກເຮົາທັງຫລາຍໃຫ້ໄດ້ຮັບຄວາມລອດພົ້ນ.

### 3. ພຣະເຈົ້າຊົງຮູ້ວ່າຈະຊ່ອຍຢ່າງໃດ? ( ອພຍ 4:10-12 )

ເວລານັ້ນໂມເຊໄດ້ອອກສຽງແກ້ຕົວດ້ວຍຄວາມເປັນຫ່ວງສາມຢ່າງ: " ຂ້າພະເຈົ້າແມ່ນໃຜທີ່ຈະຕ້ອງໄປ?" ຄຳຖາມນີ້ຂອງເພິ່ນໃນ 3:11. ພຣະເຈົ້າໄດ້ຕອບເພິ່ນດ້ວຍເວົ້າວ່າເຣື່ອງນີ້ເປັນການກະທຳຂອງພຣະອົງທີ່ສຳຄັນ, ບໍ່ແມ່ນການກະທຳຂອງໂມເຊ. ໃນ 3:13, ໂມເຊໄດ້ສາຣະພາບຕໍ່ພຣະເຈົ້າວ່າຂ້ານ້ອຍຍັງບໍ່ໄດ້ຮູ້ພຣະນາມຂອງພຣະເຈົ້າເລີຍ. ພຣະເຈົ້າໄດ້ຕອບເຣື່ອງນີ້ຄືກັນ. ຄຳແກ້ຕົວອັນທີສາມແມ່ນໃນ 4:1: " ຖ້າຫາກພວກເຂົາບໍ່ເຊື່ອແລະບໍ່ຟັງຂ້ານ້ອຍເດ? ພຣະເຈົ້າໄດ້ຕອບດ້ວຍການສຳແດງຣິດອຳນາດແບບນຶ່ງທີ່ພຣະອົງຊົງຊອບພຣະທັຍຫລາຍທີ່ຈະໄດ້ສະແດງຕໍ່ຟາໂຣ.

ໃນການສະແດງຄັ້ງທຳອິດນັ້ນ, ໄມ້ຄ້ອນເທົ້າຂອງໂມເຊໄດ້ກາຍເປັນງູ, ແລະເທື່ອນຶ່ງອີກກໍແມ່ນກ່ຽວກັບໄມ້ຄ້ອນເທົ້າເຫມືອນກັນ. ຕາມການເຫັນຂອງຄົນນັກວິເຄາະບາງຄົນວ່າແມ່ນການປະຈັກໃຫ້ເຫັນຂອງຜີປີສາດຊຶ່ງໃນນັ້ນພຣະເຈົ້າໄດ້ມີອຳນາດເຫນືອມັນ. ເປັນຫນ້າສົນໃຈ, ທີ່ພາຍລຸນມາພວກນັກຫລິ້ນກົນລວງຕາອີຢິບໄດ້ລຽນແບບການອັສະຈັນນີ້ແລະໃນທີ່ສຸດກໍຖືກປາບດ້ວຍອຳນາດທີ່ເຫນືອກວ່າຂອງພຣະເຈົ້າ ( 7:12 ). ການສະແດງອຳນາດຄັ້ງທີສອງຂອງພຣະເຈົ້າແມ່ນອຳນາດເຫນືອຮ່າງກາຍຂອງມະນຸດ. ແຂນຂອງໂມເຊໄດ້ກາຍເປັນຂີ້ທູດ; ແລ້ວແຂນນັ້ນກໍຖືກປ່ຽນແປງໃຫ້ກັບຄືນດີເຫມືອນເດີມອີກເທື່ອນຶ່ງ. ເທື່ອທີສາມໄດ້ເຮັດໃຫ້ນ້ຳໃນແມ່ນ້ຳນິນກາຍໄປເປັນເລືອດ; ເຫດການນີ້ໄດ້ສະແດງໃຫ້ເຫັນອຳນາດຂອງພຣະເຈົ້າທີ່ມີເຫນືອທັມມະຊາດ ( ຂໍ້ 14-21 ).

ເຖິງແມ່ນວ່າການສະແດງອຳນາດຂອງພຣະອົງ ແລະຄວາມຕ້ອງການຈັດຫາສິ່ງຕ່າງໆທີ່ໂມເຊອາດຈະຕ້ອງການ ປານນັ້ນໂມເຊກໍຍັງໄດ້ສືບຕໍ່ຄັດຄ້ານ: " ຂໍຊົງໂຜດທ້ອນພຣະເຈົ້າ, ຂ້ານ້ອຍເວົ້າບໍ່ເກັ່ງ." ໂມເຊຈົ່ມໃຫ້ຕົນເອງວ່າບໍ່ມີຄວາມສາມາດພຽງພໍທີ່ຈະລືມນຳຄືນຢ່າງຊຳນານຄັ້ງເມື່ອໃຊ້ຊີວິດຢູ່ອີຢິບ ແລະທັງດຽວນີ້ຢູ່ທີ່ມີດຽນ. ພຣະເຈົ້າໄດ້ຕັກເຕືອນໂມເຊຢ່າງນີ້ມນວນວ່າພຣະອົງຈະຊົງໃຫ້ຄຳເວົ້າທີ່ດີນັ້ນ. ພຣະອົງຈະຊ່ອຍເພິ່ນໃຫ້ເວົ້າເກັ່ງທັງຈະໃຫ້ຄຳສັບທີ່ຈະເວົ້ານັ້ນ. ໃນຄຳເທສນາທີ່ພູເຂົາ, ພຣະເຢຊູໄດ້ໃຫ້ຄວາມຫມັ້ນໃຈກັບສາວົກທັງຫລາຍຂອງພຣະອົງວ່າພຣະອົງຈະຢູ່ກັບພວກເຂົາເພື່ອຕອບສນອງຄວາມຕ້ອງການຂອງພວກເຂົາທຸກຢ່າງ ( ມທ 6:25-34 ). ພຣະວ່າພຣະເຈົ້າເປັນພຣະຜູ້ສ້າງ, ພຣະອົງຊົງຮູ້ຄວາມຕ້ອງການຂອງພວກເຮົາ ແລະສາມາດຈະຊ່ອຍເຮົາທຳງານຕາມພຣະປະສົງຂອງພຣະອົງ.

### 4. ພຣະເຈົ້າສາມາດເຊື່ອຖືໄດ້ ( ອພຍ 4:27-31 )

ກ່ອນທີ່ໂມເຊຈະປະສົບກັບພຣະເຈົ້າທີ່ພຸ່ມທີ່ໄຫມ້ໄຟນັ້ນ, ພຣະເຈົ້າໄດ້ຈັດຫາອາໂຣນເພື່ອເປັນຄົນເວົ້າຕາງເພິ່ນແລ້ວ. ພຣະເຈົ້າຈະຈັດຫາຄຳເວົ້າທັງຫລາຍໃຫ້ໂມເຊ ແລະນ້ອງຊາຍຂອງເພິ່ນ, ແລະທັງຈະໄດ້ສິດສອນທັງສອງວ່າຈະຕ້ອງເຮັດຢ່າງໃດແດ່ ( ຂໍ້ 14-16 ). ພຣະເຈົ້າໄດ້ບອກອາໂຣນໃຫ້ໄປພົບກັບໂມເຊໃນປ່າ. ອ້າຍນ້ອງທັງສອງ

ຄົນໄດ້ພົບກັນທີ່ພູເຂົາພຣະເຈົ້າ ແລະໄດ້ຕ້ອນຮັບຊຶ່ງກັນແລະກັນດ້ວຍການຈູບຕາມປະເພນີຂອງການຮັບຕ້ອນ. ໂມເຊໄດ້ທຳຕາມການບອກສອນຂອງພຣະເຈົ້າດ້ວຍການບອກກັບອາໂຣນວ່າພຣະເຈົ້າໄດ້ບອກເພິ່ນໃຫ້ເວົ້າອັນໃດ, ແລະກ່ຽວກັບປາກົດການຕ່າງໆທີ່ໃຫ້ເພິ່ນໄດ້ສະແດງຕໍ່ພວກອິສຣາເອັນ. ການຮັບເອົາຄຳສັ່ງສອນຂອງອາໂຣນແມ່ນເປັນຫລັກຖານເຖິງຄວາມປາຖນາທີ່ຈະກັບໄປຍັງອີຢິບນຳອ້າຍຂອງລາວ.

ຄັ້ງນຶ່ງໃນອີຢິບ, ໂມເຊແລະອາໂຣນໄດ້ເຕົ້າໂຮມພວກເຖົ້າແກ່ຂອງຄົນອິສຣາເອັນທັງໝົດ. ອາໂຣນໄດ້ທຳງານຂອງເພິ່ນເປັນຜູ້ເວົ້າຕາງໂມເຊ, ບອກພວກເຖົ້າແກ່ເຖິງສິ່ງທັງໝົດທີ່ພຣະເຈົ້າໄດ້ເວົ້າກັບໂມເຊ. ອາໂຣນໄດ້ມີຄວາມໝັ້ນໃຈກະທຳຢ່າງຄົນຂອງພຣະເຈົ້າດ້ວຍການເຮັດປະສົບການຕ່າງໆຕໍ່ຊາວອິສຣາເອັນ ທັງໆທີ່ເພິ່ນບໍ່ໄດ້ເຄີຍເຫັນປາກົດການອັນອັສຈັນຢ່າງໃດຈາກພຣະເຈົ້າໂດຍສ່ວນຕົວ. ຫລັງຈາກທີ່ໄດ້ຍິນຄຳເວົ້າຈາກອາໂຣນ ແລະເປັນພຣະຍານເຖິງປາກົດການອັສຈັນຈາກອຳນາດຂອງພຣະເຈົ້າແລ້ວ, ພວກອິສຣາເອັນກໍໄດ້ເຊື່ອ. ຜົນຈາກຄວາມເຊື່ອຂອງພວກເຂົາເຈົ້າຈຶ່ງເປັນເຫດເຮັດໃຫ້ເຂົາໄດ້ນະມັສການພຣະເຈົ້າ.

ໃນວັນທີ່ບົດຮຽນນີ້ໄດ້ຖືກບັນທຶກເອົາໄວ້, ມີເພື່ອນຄົນນຶ່ງທີ່ມະຫາວິທະຍາລັຍຂອງຂ້າພະເຈົ້າໄດ້ປະເຊີນກັບການທ້າທາຍ. ໃນຕົ້ນອາທິດນັ້ນ, ພວກເຮົາໄດ້ອະທິຖານຂໍໃຫ້ພຣະເຈົ້າໄດ້ຈັດຕຽມເງິນກ້ອນໃຫຍ່ກ້ອນນຶ່ງເພື່ອໃຊ້ຈ່າຍໃນການຮັບໃຊ້ໃນມະຫາວິທະຍາລັຍນັ້ນ. ວັນສຸດທ້າຍໄດ້ກ້າວເຂົ້າມາໃກ້ງແລ້ວ. ຫລັງຈາກພວກເຮົາໄດ້ອະທິຖານ, ເພື່ອນຂອງຂ້າພະເຈົ້າແລະຂ້າພະເຈົ້າເອງໄດ້ແລກປ່ຽນເຣື່ອງຊຶ່ງກັນແລະກັນໃນການທີ່ພຣະເຈົ້າໄດ້ຈັດຫາຄວາມຕ້ອງການແບບດຽວກັນນີ້ໃນລະຍະຜ່ານມາ. ພວກເຮົາມີຄວາມມີຄວາມໝັ້ນໃຈເຫລືອເກີນວ່າພຣະເຈົ້າຈະມີທາງຊ່ອຍເຫລືອພວກເຮົາໃນເຣື່ອງນີ້ຄືກັນ. ກ່ອນການຂຽນນີ້ບໍ່ດົນພໍເທົ່າໃດຊົ່ວໂມງ, ພຣະເຈົ້າກໍໄດ້ມີທຶນໃຫ້ເຮົາຢ່າງພໍດີບພໍດີ! ຂ້າພະເຈົ້າພ້ອມດ້ວຍເພື່ອນທັງສອງກໍບໍ່ໄດ້ຮູ້ສຶກແປກໃຈຢ່າງໃດ? ເມື່ອພວກເຮົາຮູ້ວ່າພຣະເຈົ້າມີຄວາມສາມາດຈະຊ່ອຍໃນສະພາບການທີ່ເກີນຄວາມສາມາດນັ້ນ ແລະພຣະເຈົ້າກໍຕ້ອງການຈະຊ່ອຍແທ້, ພວກເຮົາຈຶ່ງຄວນສະແດງອອກໃຫ້ເຫັນເຖິງຄວາມໄວ້ວາງໃຈໃນພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.